ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

==000==

ກະຊວງສຶກສາທິການ ແລະ ກິລາ

ເລກທີ 2333 /ສສກ.ຈ

ນະຄອນຫຼວງວຽງຈັນ, ວັນທີ 17 JUN 2014

## ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານດຳລົງຕຳແໜ່ງບໍລິຫານ

## ຂອງຫ້ອງການພັດທະນາຊັບພະຍາກອນມະນຸດ,ກົມແຜນການ

ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011.

ອີງຕາມ: ການເຫັນດີຂອງຄະນະນຳ ກະຊວງສຶກສາທິການ ແລະ ກິລາ.

ອີງຕາມ : ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ

**ລັດຖະມົນຕີວ່າການ ກະຊວງສຶກສາທິການແລະກິລາຕົກລົງ:**

ມາດຕາ1: **ຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ນ. ດອກແກ້ວ ພົມທະຈິດ,** ຫົວໜ້າພະແນກ, ຫ້ອງການປະສານງານແຜນງານ ຂອງກົມອະນຸບານ ແລະ ປະຖົມສຶກສາມາເປັນ ຫົວໜ້າຫ້ອງການພັດທະນາຊັບພະຍາກອນມະນຸດ ຂອງກົມແຜນການ, ກະຊວງສຶກສາທິການ ແລະ ກິລາ.

ມາດຕາ 2: ພະນັກງານທີ່ຖືກແຕ່ງຕັ້ງໃນມາດຕາ 1 ຂ້າງເທິງມີສິດໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານ ປະເພດ 4 ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ,ລົງວັນທີ 23/06/2008.

ມາດຕາ3: ເງິນເດືອນ,ເງິນສະຫວັດດີການສັງຄົມຕ່າງໆມອບໃຫ້ການເງິນຂັ້ນສອງເປັນຜູ້ຄິດໄລ່ແລະເບີກຈ່າຍໃຫ້ຜູ້ກ່ຽວຕາມການເບີກຈ່າຍຂອງກົມກອງເກົ່າ.

ມາດຕາ4: ໃຫ້ຫ້ອງການກະຊວງສຶກສາທິການແລະກິລາ,ກົມຈັດຕັ້ງແລະພະນັກງານ,ກົມການເງິນ,ກົມແຜນການ ຫ້ອງການພັດທະນາຊັບພະຍາກອນມະນຸດ,ຜູ້ກ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

ມາດຕາ5: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ຮ. ລັດຖະມົນຕີວ່າການ ກະຊວງສຶກສາທິການແລະກິລາ

ລັດຖະມົນຕີ

ນ.ແສງເດືອນ ຫຼ້າຈັນທະບູນ

<u>ບ່ອນສົ່ງ:</u>

| | |
|---|---|
| - ກະຊວງພາຍໃນ | 1 ສະບັບ. |
| - ຫ້ອງການກະຊວງສຶກສາທິການແລະກິລາ | 1 ສະບັບ. |
| - ກົມຈັດຕັ້ງແລະພະນັກງານ | 2 ສະບັບ |
| - ກົມການເງິນ | 1 ສະບັບ. |
| - ກົມແຜນການ | 1 ສະບັບ |
| - ກົມອະນຸບານ ແລະ ປະຖົມສຶກສາ | 1 ສະບັບ |
| - ການເງິນຂັ້ນສອງ | 3 ສະບັບ. |
| - ຫ້ອງການພັດທະນາຊັບພະຍາກອນມະນຸດ | 1 ສະບັບ |
| - ຜູ້ກ່ຽວ | 1 ສະບັບ. |
| - ເກັບມ້ຽນ | 2 ສະບັບ. |

16/6/2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

==000==

ກະຊວງສຶກສາທິການແລະກິລາ

ເລກທີ 2334/ສສກ.ຈຕ

ນະຄອນຫຼວງວຽງຈັນ, ວັນທີ 17 JUN 2014

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງບໍລິຫານ**

**ຂອງຫ້ອງການພັດທະນາຊັບພະຍາກອນມະນຸດ,ກົມແຜນການ**

ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011.

ອີງຕາມ: ໜັງສືສະເໜີຂອງ ກົມແຜນການ ,ເລກທີ 1273/ຜກ. ບທ, 14,ລົງວັນທີ 16/06/ 2014.

ອີງຕາມ : ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ

**ລັດຖະມົນຕີວ່າການ ກະຊວງສຶກສາທິການແລະກິລາຕົກລົງ:**

ມາດຕາ1: ແຕ່ງຕັ້ງ ຮອງຫົວໜ້າຫ້ອງການ ຈຳນວນ 02 ທ່ານ, ຍິງ 01 ທ່ານ ຂອງຫ້ອງການພັດທະນາຊັບພະຍາກອນມະນຸດ ຂອງກົມແຜນການ,ກະຊວງສຶກສາທິການ ແລະ ກິລາ ຊຶ່ງມີລາຍຊື່ລຸ່ມນີ້ :

| ລ/ດ | ຊື່ແລະນາມສະກຸນ | ຕຳແໜ່ງເກົ່າ | ດຳລົງຕຳແໜ່ງ | ຕຳແໜ່ງບໍລິຫານ |
|---|---|---|---|---|
| 1. | ທ່ານ ນ. ດາວວຽງ ພົງສະຫວັດ | ຮອງຫົວໜ້າພະແນກແຜນການ | ເປັນຮອງຫົວໜ້າຫ້ອງການ | ປະເພດ 5 |
| 2. | ທ່ານ ຊຽງແພງ ພອນວິໄສ | ວິຊາການ | ເປັນຮອງຫົວໜ້າຫ້ອງການ | ປະເພດ 5 |

ມາດຕາ 2: ພະນັກງານທີ່ຖືກແຕ່ງຕັ້ງໃນມາດຕາ 1 ຂ້າງເທິງມີສິດໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານ ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ,ລົງວັນທີ 23/06/2008.

ມາດຕາ3: ໃຫ້ຫ້ອງການກະຊວງສຶກສາທິການແລະກິລາ,ກົມຈັດຕັ້ງແລະພະນັກງານ,ກົມການເງິນ,ກົມແຜນການ ຫ້ອງການພັດທະນາຊັບພະຍາກອນມະນຸດ,ພວກກ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

ມາດຕາ4: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ຕ/ລ. ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ

ມ.ແສງເດືອນ ຫຼ້າຈັນທະບູນ

<u>ບ່ອນສົ່ງ:</u>

| | |
|---|---|
| - ກະຊວງພາຍໃນ | 1 ສະບັບ. |
| - ຫອ້ງການກະຊວງສຶກສາທິການແລະກິລາ | 1 ສະບັບ. |
| - ກົມຈັດຕັ້ງແລະພະນັກງານ | 2 ສະບັບ |
| - ກົມການເງິນ | 1 ສະບັບ. |
| - ກົມແຜນການ | 1 ສະບັບ |
| - ຫ້ອງການພັດທະນາຊັບພະຍາກອນມະນຸດ | 1 ສະບັບ |
| - ການເງິນຂັ້ນສອງ | 3 ສະບັບ. |
| - ພາກສ່ວນກ່ຽວຂ້ອງ | 1 ສະບັບ |
| - ພວກກ່ຽວ ຜູ້ລະ | 1 ສະບັບ. |
| - ເກັບມ້ຽນ | 2 ສະບັບ. |

16/6/2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----000-----

2288---

ກະຊວງສຶກສາທິການ ແລະ ກິລາ ເລກທີ /ສສກ.ຈຕ

ນະຄອນຫຼວງວຽງຈັນ, ວັນທີ 13 JUN 2014

ຂໍ້ຕົກລົງລັດຖະມົນຕີ

ວ່າດ້ວຍການສ້າງຕັ້ງ ຫ້ອງການພັດທະນາຊັບພະຍາກອນມະນຸດ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011 ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ, ລົງວັນທີ 22 ພະຈິກ 2013

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ຈຶ່ງຕົກລົງ:

ມາດຕາ 1. ອະນຸມັດ ສ້າງຕັ້ງຫ້ອງການພັດທະນາຊັບພະຍາກອນມະນຸດ, ຊຶ່ງມີທີ່ຕັ້ງຢູ່ກະຊວງສຶກສາທິການ ແລະ ກິລາ ແລະ ພາຍໃຕ້ການຊີ້ນຳຂອງກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ, ມີຖານະເທົ່າທຽມກັບພະແນກຂອງກົມ.

ມາດຕາ 2. ຫ້ອງການພັດທະນາຊັບພະຍາກອນມະນຸດ ມີພາລະບົດບາດ ເປັນໜ່ວຍງານຊ່ວຍວຽກກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ໃນການປະສານງານ, ການຄົ້ນຄ້ວາສ້າງແຜນຍຸດທະສາດ, ແຜນປະຕິບັດງານ ແລະ ແຜນພັດທະນາຊັບພະຍາກອນມະນຸດ ຮ່ວມກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ຮ່ວມມືກັບຕ່າງປະເທດ.

ມາດຕາ 3. ຫ້ອງການພັດທະນາຊັບພະຍາກອນມະນຸດ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1) ຊ່ວຍວາງແຜນການໃນການຄົ້ນຄວ້າສ້າງ ແລະ ປັບປຸງແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ;
2) ຊ່ວຍຄົ້ນຄວ້າແນວທາງນະໂຍບາຍຂອງພັກ ຫັນເປັນແຜນຍຸດທະສາດ, ແຜນປະຕິບັດງານ ແລະ ແຜນພັດ ທະນາຊັບພະຍາກອນມະນຸດແຫ່ງຊາດ;
3) ຊ່ວຍສ້າງ ແລະ ປັບປຸງນິຕິກຳທີ່ກ່ຽວຂ້ອງກັບວຽກງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;
4) ຊ່ວຍປະສານງານກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນ, ສຶກສາຄົ້ນຄ້ວາ, ສຳຫຼວດ, ວິເຄາະ ແລະ ວິໄຈ ສະພາບການພັດທະນາຊັບພະຍາກອນມະນຸດ ຢູ່ ສປປ ລາວ ເພື່ອເປັນຂໍ້ມູນໃນການວາງແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

5) ຄົ້ນຄວ້າສັງລວມແຜນຄວາມຕ້ອງການ, ແຜນແບ່ງປັນພະນັກງານ-ນັກສຶກສາຢູ່ພາຍໃນ ແລະ ຕ່າງປະເທດ;

6) ຈັດຕັ້ງເຜີຍແຜ່ທິດທາງ ແຜນຍຸດທະສາດ ແລະ ຈັດກອງປະຊຸມຝຶກອົບຮົມ ກ່ຽວກັບການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃຫ້ແກ່ໜ່ວຍງານປະສານງານວຽກງານດັ່ງກ່າວ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

7) ຊ່ວຍຊຸກຍູ້, ຕິດຕາມ , ກວດກາ ແລະ ຕີລາຄາປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການພັດທະນາຊັບພະຍາກອນມະນຸດຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການຈັດຕັ້ງຕ່າງໆ ພ້ອມທັງປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ;

8) ຊ່ວຍປະສານສົມທົບກັບບັນດາກະຊວງ ແລະ ອົງການທຽບເທົ່າກະຊວງເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະທຶນຮອນຈາກອົງການຈັດຕັ້ງສາກົນ, ບັນດາອົງການຈັດຕັ້ງຕ່າງໆຢູ່ພາຍໃນ ແລະຕ່າງປະເທດ ທັງພາກລັດ ແລະ ເອກະຊົນ ເພື່ອນຳໃຊ້ເຂົ້າໃນການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

9) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະລັດຖະມົນຕີວ່າການກະຊວງສຶກສາທິການ ແລະກິລາ.

ມາດຕາ 4. ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງຫ້ອງການພັດທະນາຊັບພະຍາກອນມະນຸດ ປະກອບມີດັ່ງນີ້:

| | |
|---|---|
| 1) ຫົວໜ້າຫ້ອງການ | 1 ຕຳແໜ່ງ |
| 2) ຮອງຫົວໜ້າຫ້ອງການ | 2 ຕຳແໜ່ງ |
| 3) ພະນັກງານວິຊາການ | 5 ຕຳແໜ່ງ |

ມາດຕາ 5. ມອບໃຫ້ຫ້ອງການພັດທະນາຊັບພະຍາກອນມະນຸດ ກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຕຳແໜ່ງງານໃຫ້ລະອຽດ;

ມາດຕາ 6. ງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກງານຕ່າງໆ ຂອງຫ້ອງການພັດທະນາຊັບພະຍາກອນມະນຸດ ແມ່ນໄດ້ມາຈາກງົບປະມານຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ. ກາປະທັບ ແມ່ນນຳໃຊ້ກາປະທັບຂອງກົມແຜນການ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

ມາດຕາ 7. ໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ, ກົມແຜນການ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງຕົນ.

ມາດຕາ 8. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ນ.ແສງເດືອນ ຫຼ້າຈັນທະບູນ

+ ບ່ອນສົ່ງ:

| | |
|---|---|
| 1. ກະຊວງພາຍໃນ | 1 ສະບັບ. |
| 2. ບັນດາກະຊວງ-ອົງການທຽບເທົ່າກະຊວງ ພາກສ່ວນລະ | 1 ສະບັບ. |
| 3. ຫ້ອງການກະຊວງສຶກສາທິການ ແລະ ກິລາ | 1 ສະບັບ. |
| 4. ບັນດາກົມ ແລະ ສະຖາບັນ ພາກສ່ວນລະ | 1 ສະບັບ |
| 5. ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນລະ | 1 ສະບັບ. |
| 6. ເກັບມ້ຽນ | 3 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
====000====

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

2287

ເລກທີ /ສສກ.ຄຊພຊ
ນະຄອນຫຼວງວຽງຈັນ, ວັນທີ. . 13. JUN 2014

**ຂໍ້ຕົກລົງ**
**ຂອງປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ**
**ວ່າດ້ວຍການແຕ່ງຕັ້ງກອງເລຂາຄະນະກຳມາທິການແຫ່ງຊາດ**
**ເພື່ອການພັດທະນາຊັບພະຍາກອນມະນຸດ**

- **ອີງຕາມ** ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດສະບັບເລກທີ 315/ນຍ,ລົງວັນທີ 22 ພະຈິກ 2013.
- ອີງຕາມ ບົດບັນທຶກກອງປະຊຸມຄັ້ງປະຖົມມະລຶກຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ຄັ້ງວັນທີ 7 ກຸມພາ 2014.

**ປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ**
**ຈິ່ງຕົກລົງ:**

ມາດຕາ 1. ແຕ່ງຕັ້ງກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ, ຊຶ່ງປະກອບມີ ດັ່ງນີ້:

1.ທ່ານ ດຣ ບຸນປັນ ໄຊມຸນຕຣີ, ຮັກສາການຫົວໜ້າກົມແຜນການ ກະຊວງສຶກສາທິການ ແລະ ກິລາ ເປັນຫົວໜ້າ
2. ທ່ານ ມີໄຊກອນ ວັນນະຈິດ, ຮອງຫົວໜ້າກົມແຜນການ ກະຊວງສຶກສາທິການ ແລະ ກິລາ ເປັນຮອງ
3. ທ່ານ ດຣ. ວົງພະຈັນ ວິໄລຫອມ, ຮອງຫົວໜ້າກົມ ກິດຈະການນັກສຶກສາ, ສສກ ເປັນຮອງ
4. ທ່ານ ນາງ ວຽງແກ້ວ ພົມມະວົງ, ຮອງຫົວໜ້າກົມຈັດຕັ້ງ-ພະນັກງານ, ສສກ ເປັນຮອງ
5. ທ່ານ ດຣ. ນາງ ດາລາວອນ ກິດຕິພັນ, ຫົວໜ້າພະແນກຄົ້ນຄວ້າສັງລວມ ຫ້ອງການ ສສກ ເປັນຄະນະ
6. ທ່ານ ສີທອງ ສີຂາວ, ຫົວໜ້າພະແນກແຜນການ ກົມແຜນການ, ສສກ ເປັນຄະນະ
7. ທ່ານ ວິລະສັກ ທິບພະເນດ, ຫົວໜ້າພະແນກບໍລິຫານ ກົມແຜນການ, ສສກ ເປັນຄະນະ
8. ທ່ານ ນາງ ດອກແກ້ວ ພົນທະຈິດ, ຫົວໜ້າຫ້ອງການປະສານງານແຜນງານ, ສສກ ເປັນຄະນະ
9. ທ່ານ ນາງ ດາວວຽງ ພົງສະຫວັດ, ຮອງຫົວໜ້າພະແນກແຜນການ ກົມແຜນການ, ສສກ ເປັນຄະນະ
10. ທ່ານ ຊຽງແພງ ພອນວິໄສ, ວິຊາການ ພະແນກແຜນການ ກົມແຜນການ, ສສກ ເປັນຜູ້ຊ່ວຍວຽກ

11. ທ່ານ ວຽງທອງ ສີລັດຕະນະວົງ, ວິຊາການ ພະແນກແຜນການ ກົມແຜນການ, ສສກ ເປັນຜູ້ຊ່ວຍວຽກ

12. ທ່ານ ສິນບັນຈົງ ວົງປະກາຍ, ວິຊາການ ພະແນກແຜນການ ກົມແຜນການ, ສສກ ເປັນຜູ້ຊ່ວຍວຽກ

**ມາດຕາ 2.** ກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ມີພາລະບົດບາດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ;
2. ເປັນໃຈກາງໃນການຄົ້ນຄວ້າ ແລະ ປັບປຸງແຜນພັດທະນາຊັບພະຍາກອນມະນຸດ ໄລຍະສັ້ນ ແລະ ໄລຍະຍາວ, ພ້ອມທັງປັບປຸງແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ແຫ່ງຊາດ 2016-2025 ໃຫ້ສຳເລັດ ໃນທ້າຍປີ 2014.
3. ສ້າງ ແລະ ປັບປຸງນິຕິກຳ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການພັດທະນາຊັບພະຍາກອນ ມະນຸດ;
4. ປະສານງານກັບຄະນະປະສານງານຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ພາກສ່ວນຕ່າງໆ ກ່ຽວ ກັບວຽກງານການພັດທະນາຊັບພະຍາກອນມະນຸດ ຂອງແຕ່ລະຂະແໜງການ;
5. ຈັດຕັ້ງກອງປະຊຸມຄົ້ນຄ້ວາ, ປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວຽກງານພັດທະນາຊັບພະ ຍາກອນມະນຸດ ພ້ອມທັງລາຍງານໃຫ້ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ຮັບຊາບ ເປັນແຕ່ລະໄລຍະ;
6. ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານການປະຕິບັດໜ້າທີ່ວຽກງານຂອງຄະນະປະສານງານພາກ ສ່ວນຕ່າງໆ ໃຫ້ແກ່ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະນຳ ກະຊວງສຶກສາທິການ ແລະ ກິລາ ຮັບຊາບເປັນແຕ່ລະໄລຍະ;
7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາ ກອນມະນຸດ ແລະ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມແຜນການ, ກົມຈັດຕັ້ງແລະພະນັກງານ, ກົມກິດຈະການ ນັກສຶກສາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມາທິການແຫ່ງຊາດ**
**ເພື່ອການພັດທະນາຊັບພະຍາກອນມະນຸດ,**

ນ.ແສງເດືອນ ຫຼ້າຈັນທະບູນ

**ບ່ອນສົ່ງ:**

| | |
|---|---|
| - ບັນດາກະຊວງ-ອົງການທຽບເທົ່າກະຊວງ ພາກສ່ວນລະ | 1 ສະບັບ |
| - ຫ້ອງການ ກະຊວງສຶກສາທິການ ແລະ ກິລາ | 1 ສະບັບ |
| - ກົມຈັດຕັ້ງແລະພະນັກງານ | 1 ສະບັບ |
| - ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນລະ | 1 ສະບັບ |
| - ພວກກ່ຽວ ຜູ້ລະ | 1 ສະບັບ |
| - ເກັບມ້ຽນ | 1 ສະບັບ |